


# ຊົມເຊີຍ




## 1. ລາງວັນ ທະນາຄານດີເດັ່ນພາຍໃນແຫ່ງປີ

**(ຫຼື Domestic Retail Bank of The Year)**

## 2. ລາງວັນດີເດັ່ນດ້ານແນວຄວາມຄິດລິເລີ່ມໃນການໃຫ້ບໍລິການແບບອອນໄລ

**(ຫຼື Online Banking Initiative of The Year)**

ວາລະສານການທະນາຄານແລະການເງິນອາຊີ (Asian Banking and Finance Magazine) ມອບ 2 ລາງວັນດີເດັ່ນໃຫ້ແກ່ ທຄຕລ ຢູ່ໃນງານປະກາດລາງວັນການທະນາຄານແລະການເງິນອາຊີ ປະຈຳປີ 2016 (Asian Banking and Finance Awards 2016) ທີ່ຈັດຂຶ້ນໃນຄ່ຳຄືນ ຂອງວັນທີ 20 ກໍລະກົດ 2016 ຢູ່ທີ່ໂຮງແຮມຊາງກຣີລາ, ປະເທດສິງກະໂປ.

ທັງສອງລາງວັນທີ່ ທຄຕລ ໄດ້ຮັບແມ່ນມາຈາກປະເພດ ທະນາຄານບໍລິການລູກຄ້າທົ່ວໄປ (Retail Banking) ໄດ້ແກ່: **①. ລາງວັນທະນາຄານດີເດັ່ນພາຍໃນປະຈຳປີ 2016** ແລະ **②. ລາງວັນດີເດັ່ນດ້ານແນວຄວາມຄິດລິເລີ່ມໃນການໃຫ້ບໍລິການຜ່ານແບບອອນໄລແຫ່ງປີ** ເຊິ່ງ ທຄຕລ ເປັນທະນາຄານພຽງແຫ່ງດຽວໃນ ສປປ ລາວ ທີ່ໄດ້ຮັບລາງວັນອັນຊົງກຽດດັ່ງກ່າວ. ສຳລັບລາງວັນປະເພດນີ້ມີ 65 ທະນາຄານຈາກ 24 ປະເທດທີ່ໄດ້ຮັບລາງວັນໃນປີນີ້. ສຳລັບລາງວັນ ທະນາຄານດີເດັ່ນພາຍໃນແຫ່ງປີ ທຄຕລ ໄດ້ຮັບມາ 5 ປີຕິດຕໍ່ກັນນັບແຕ່ປະຈຳປີ 2012 ເປັນຕົ້ນມາ ແລະ ລາງວັນທະນາຄານດີເດັ່ນດ້ານແນວຄວາມຄິດລິເລີ່ມໃນການໃຫ້ບໍລິການແບບອອນໄລແຫ່ງປີ ກໍ່ເປັນຄັ້ງທີສອງພາຍຫຼັງທີ່ໄດ້ຮັບມາໃນປີ 2014 ຈາກການພັດທະນາຜະລິດຕະພັນ BCEL One ທີ່ມີຄວາມໂດດເດັ່ນ. ລາງວັນທີ່ ທຄຕລ ໄດ້ຮັບໃນເທື່ອນີ້ເປັນສິ່ງທີ່ຢັ້ງຢືນເຖິງຄຸນນະພາບໃນການບໍລິການຂອງ ທຄຕລ ແລະ ການຍອມຮັບຂອງສາກົນຕໍ່ ທຄຕລ ໄດ້ເປັນຢ່າງດີ.

ການສະເໜີຊື່ທະນາຄານເພື່ອເຂົ້າຮັບລາງວັນ ແລະ ການຕັດສິນ ແມ່ນພິຈາລະນາໂດຍຄະນະກຳມະການ ທີ່ມາຈາກບັນດາບໍລິສັດກວດສອບບັນຊີທີ່ມີຊື່ສຽງລະດັບສາກົນ ອັນປະກອບດ້ວຍຕົວແທນຈາກ: ບໍລິສັດ Ernst & Young, PwC, Deloitte ແລະ KPMG.




ທ່ານ ສຸພັກ ຖິ່ນໄຊພອນ, ຮອງຜູ້ອຳນວຍການໃຫຍ່ ທຄຕລ, ຕາງໜ້າ ທຄຕລ ເຂົ້າຮ່ວມຮັບລາງວັນ